ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ
LAO CEMENT PUBLIC COMPANY

ຖະໜົນ ໜອງບອນ ວຽງຈັນ, ສ. ປ. ປ. ລາວ ຕູ້ ປ.ນ 6821. ໂທຣ: (856-21) 412111, 451116 ແຟັກ: 263120, 451222
NONGBONE RD, VIENTIANE, LAO P.D.R P.O.BOX 6821, TEL: (856-21) 412111, 451116 FAX: 263120, 451222
E-mail: Lcc@laocement.com, www.laocement.com

ເລກທີ 191/ບຊລ

ນະຄອນຫລວງວຽງຈັນ, ວັນທີ 11 JUN 2018

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017
ບໍລິສັດ ຊີມັງລາວ ມະຫາຊົນ (ບຊລ)

ປະຊຸມເມື່ອວັນທີ 31/05/2018 ເວລາ 14,00 ໂມງ ທີ່ຫ້ອງປະຊຸມຊັ້ນ 14 ໂຮງແຮມດອນ.ຈັນພາເລດ, ບ້ານ ທາດຂາວ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ, ເປັນປະທານກອງປະຊຸມໂດຍທ່ານ ຫຼີວເຫວີຍ ປະທານ ສະພາບໍລິຫານ ບຊລ ຊຶ່ງມີຜູ້ເຂົ້າຮ່ວມກອງປະຊຸມທັງໝົດ 28 ທ່ານ, ໃນນີ້ມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມ 12 ທ່ານ ແລະມອບສັນທະ 01 ທ່ານ, ມີຮຸ້ນລວມກັນທັງໝົດ 35,387,900 ຮຸ້ນ ເທົ່າກັບ 88 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະກົດລະບຽບຂອງບໍລິສັດ,

ກ່ອນຍຶ້ນກອງປະຊຸມໄດ້ກ່າວຕ້ອນຮັບແຂກ ແລະແນະນຳຜູ້ທີ່ເຂົ້າຮ່ວມປະຊຸມ ດັ່ງນີ້ :

1. ທ່ານ ຫຼີວເຫວີຍ ຕຳແໜ່ງ : ປະທານສະພາບໍລິຫານ ບຊລ , ຜູ້ອຳນວຍການໃຫ່ຍ ບໍລິສັດ ຢຸນນານສາກົນ (ຮ່ວມທຶນ) ,
2. ທ່ານ ບຸນແປ່ງ ປົວພັນ ຕຳແໜ່ງ : ຮອງປະທານສະພາບໍລິຫານ ບຊລ, ຜູ້ອຳນວຍການໃຫ່ຍ ລັດວິສາຫະກິດ ພກອ,
3. ທ່ານ ຈ່າງລີ ຕຳແໜ່ງ : ກຳມະການສະພາບໍລິຫານ, ຜູ້ອຳນວຍການ ບຊລ,
4. ທ່ານ ຄຳປົນ ໄຊເລົ່າວົງ ຕຳແໜ່ງ : ກຳມະການສະພາບໍລິຫານ ບຊລ, ຮອງຜູ້ອຳນວຍການ ລັດວິສາຫະກິດ ພກອ,
5. ທ່ານ ຫລຽນ ກົ່ງຄຳພັດ ຕຳແໜ່ງ : ກຳມະການສະພາບໍລິຫານ, ຮອງຜູ້ອຳນວຍການ ບຊລ,
6. ທ່ານ ;ຈ້ຍ ຢ້າວຊີ ຕຳແໜ່ງ : ກຳມະການສະພາບໍລິຫານ ບຊລ,
7. ທ່ານ ຫຼ້ຽນໄປ ຕຳແໜ່ງ : ກຳມະການອິດສະຫຼະ ບຊລ,
8. ທ່ານ ວົງວໍຈິດ ;ເກ້ອວົງກິດ ຕຳແໜ່ງ : ກຳມະການອິດສະຫຼະ ບຊລ,

ຈາກນັ້ນກອງປະຊຸມໄດ້ສະເໜີໃຫ້ ທ່ານ ຫຼ້ວເຫວີຍ ປະທານສະພາບໍລິຫານ ບຊລ ເປັນປະທານກອງປະຊຸມ ແລະດຳເນີນກອງປະຊຸມຕາມວາລະດັ່ງນີ້:

ກ່ອນອື່ນທ່ານໄດ້ລະເໜີກ່ຽວກັບລະບຽບ, ວິທີການລົງຄະແນນສຽງ ແລະ ສະເໜີວາລະຂອງການປະຊຸມໃຫ້ທີ່ປະຊຸມຊາບ ລະອຽດດັ່ງລຸ່ມນີ້ :

1. ການລົງຄະແນນສຽງ :

1, ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ,

2, ກ່ອນການລົງຄະແນນສຽງໃນແຕ່ລະວາລະ ປະທານຈະໃຫ້ຜູ້ຖືຮຸ້ນມີເຫັນດີ,

3, ກໍລະນີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ການເຄື່ອງໝາຍໃສ່ຊ່ອງບໍ່ເຫັນດີໃນບັດລົງຄະແນນ ແລ້ວຍົກບັດນັ້ນຂຶ້ນ ເພື່ອໃຫ້ພະນັກງານນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກຂຶ້ນ ຈະຖືວ່າເຫັນດີຕາມທີ່ສະເໜີໃນກອງປະຊຸມ, ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຂັດເຄື່ອງໝາຍໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວ, ຊຶ່ງບໍລິສັດ ໄດ້ນັບຫຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ,

4, ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນນັ້ນ ແມ່ນໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງຂອງຜູ້ຖືຮຸ້ນທີ່ໄດ້ລະບຸໄວ້ໃນໃບມອບສັນທະນັ້ນ,

2. ການນັບ ແລະການແຈ້ງຜົນການລົງຄະແນນສຽງ

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ນັບຫຶກໄວ້ລ່ວງໜ້າທີ່ມາເຂົ້າຮ່ວມກອງປະຊຸມ ແລະລົງຄະແນນສຽງໃນແຕ່ລະວາລະ,
- ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະໃຫ້ກອງປະຊຸມຮັບຊາບ ຫລັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸງ ໂດຍຈະແຍກຄະແນນເຫັນດີ ແລະບໍ່ເຫັນດີເປັນຈຳນວນສຽງ ແລະເປັນຈຳນວນຈັກສ່ວນຮ້ອຍ,
- ສຳລັບຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ຫລັງຈາກທີ່ປະທານໄດ້ປະກາດຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ,

ໂດຍອີງຕາມລະບຽບ ແລະກົດໝາຍທີ່ກ່ຽວຂ້ອງ ໃນກອງປະຊຸມຄັ້ງນີ້ແມ່ນບໍ່ອະນຸຍາດໃຫ້ຜູ້ສັງເກດການ ມີຄຳຖາມໃນເວລາດຳເນີນກອງປະຊຸມ, ມີພຽງແຕ່ຜູ້ຖືຮຸ້ນເທົ່ານັ້ນມີສິດຕັ້ງຄຳຖາມ ແລະປະກອບຄຳເຫັນກ່ຽວກັບວາລະກອງປະຊຸມ,

ເວລາຕໍ່ມາ, ທ່ານ ຫຼ້ວເຫວີຍ ປະທານກອງປະຊຸມໄດ້ເຊີນເຂົ້າສູ່ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ໂດຍມອບໃຫ້ຜູ້ທີ່ກ່ຽວຂ້ອງລາຍງານເປັນແຕ່ລະວາລະ ຊຶ່ງມີລາຍລະອຽດ ດັ່ງລຸ່ມນີ້ :

ວາລະທີ 1 : ລາຍງານຜົນການດຳເນີນທຸລະກິດປະຈຳປີ 2017

ຜູ້ອຳນວຍການໃຫ່ຍ ບໍລິສັດ (ທ່ານ ຈ່າງລີ) ໄດ້ລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2017 ເພື່ອໃຫ້ຜູ້ຖືຮຸ້ນຮັບຊາບເຖິງຜົນການສຳເລັດຂອງທຸລະກິດຂອງບໍລິສັດ ໃນປີ2017 ດັ່ງມີລາຍລະອຽດໃນ ເອກະສານຄັດຕິດ 02, ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບ ແລະກອງປະຊຸມສະພາບໍລິຫານ ບຊລ ກໍໄດ້ຮັບຮອງຄວາມຖືກຕ້ອງແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ, ຮັບຮອງບົດລາຍງານດັ່ງກ່າວ,

ຫລັງຈາກ ຜູ້ອຳນວຍການ ບຊລ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 01 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນ,

• ການຖາມ-ຕອບ :

- **ຜູ້ຖືຮຸ້ນ** : ທ່ານ ໄກອ້ອນ ກະດາວນ໌ດ ຜູ້ຖືຮຸ້ນຕ່າງປະເທດ ໄດ້ປະກອບຄຳເຫັນຕໍ່ກອງປະຊຸມຄື :

  1, ສະເໜີວ່າ: ໃຫ້ບໍລິສັດຍົກເອົາມະຕິກອງປະຊຸມຜູ້ຖືຮຸ້ນໃນຄັ້ງກ່ອນມາພິຈາລະນາ ຮັບຮອງໃນກອງປະຊຸມໃນຄັ້ງນີ້ດ້ວຍ,

  2, ສະເໜີໃຫ້ມີການປັບປຸງເນື້ອໃນເວັບໄຊ ບຊລ, ເພີ່ມເນື້ອຫາສາລະ ແລະການໂຄສະນາຕ່າງໆ ເພື່ອເປັນຊ່ອງທາງໃຫ້ນັກລົງທຶນໄດ້ສຶກສາຂໍ້ມູນຂອງບໍລິສັດ,

  3, ເພີ່ມທະວີໃນວຽກງານການກະກຽມກອງປະຊຸມ, ໂດຍການປັບປຸງແກ້ໄຂໂຄງປຶກ ແລະເອກະສານທີ່ນຳໃຊ້ໃນການລົງຄະແນນ ແລະນັບຄະແນນສຽງ,

- **ຜູ້ຖືຮຸ້ນ** : ທ່ານ ວັນທອງ ສິດທິກຸນ ຜູ້ຖືຮຸ້ນພາຍໃນ ໄດ້ສະເໜີຕໍ່ກອງປະຊຸມຄື :

  1, ຄວນມີການປັບປຸງລະບົບຄຸ້ມຄອງຄຸນນະພາບ (ISO) ເປັນແຕ່ລະໄລຍະ ເພື່ອໃຫ້ສອດຄ່ອງກັບສະພາບປະຈຸບັນທີ່ມີການປ່ຽນແປງ,

  2, ຄວນເອົາໃຈໃສ່ດ້ານສະພາບແວດລ້ອມເພື່ອໃຫ້ສອດຄ່ອງກັບນະໂຍບາຍຂອງແຂວງວຽງຈັນທີ່ຈະຍົກເອົາເມືອງວຽງວັງເປັນເມືອງທ່ອງທ່ຽວລະດັບຊາດ,

- **ຈາກນັ້ນທາງໜ້າບໍລິສັດ** : ກໍໄດ້ຊີ້ແຈງຕໍ່ກອງປະຊຸມຜູ້ຖືຮຸ້ນ ຄື :

  1) ກ່ອນອື່ນໄດ້ຂອບໃຈຕໍ່ຄຳສະເໜີແນະຂອງຜູ້ຖືຮຸ້ນ. ທັງເຫັນດີຕໍ່ການສະເໜີໃຫ້ນຳເອົາມະຕິກອງປະຊຸມຜູ້ຖືຮຸ້ນໃນຄັ້ງກ່ອນມາພິຈາລະນາ, ຮັບຮອງໃນກອງປະປະຊຸມໃນຄັ້ງນີ້,

  2) ກ່ຽວກັບການປັບປຸງເນື້ອໃນຂອງເວັບໄຊ ແມ່ນທາງບໍລິສັດໄດ້ມີການແຕ່ງຕັ້ງທີມງານຮັບຜິດຊອບໃນໄລຍະຜ່ານມານີ້ ແລະຈະໄດ້ມີການປັບປຸງໃຫ້ດີຂຶ້ນໃນໄວໆນີ້,

  3) ດ້ານລະບົບຄຸ້ມຄອງຄຸນນະພາບກໍ່ໄດ້ມີການກວດສອບພາຍໃນ ແລະພາຍນອກຕາມກຳນົດເວລາ ຢ່າງເປັນປົກກະຕິ,

  ຈາກນັ້ນ ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳເຫັນ ຫຼື ສອບຖາມຕື່ມແລ້ວ ປະທານຈຶ່ງໄດ້ສະເໜີກອງປະຊຸມພິຈາລະນາ ແລະຮັບຮອງເອົາບົດລາຍງານດັ່ງກ່າວ ໂດຍບໍ່ມີການລົງຄະແນນສຽງ.

ວາລະທີ 2 : ພິຈາລະນາ ແລະຮັບຮອງ ບົດລາຍງານການເງິນປີ 2017

ທ້າວໜ້າພະແນກບັນຊີ-ການເງິນ (ທ່ານ ຈ່າງຢົງຟ) ໄດ້ສະເໜີຕໍ່ທີ່ປະຊຸມ ພິຈາລະນາ ແລະຮັບຮອງ ກ່ຽວກັບ ບົດລາຍງານການເງິນປີ 2017 ດັ່ງມີລາຍລະອຽດໃນ <u>ເອກະສານຄັດຕິດ 03</u> ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ໄດ້ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບ ແລະກອງປະຊຸມສະພາບໍລິຫານກໍ່ໄດ້ຮັບຮອງຄວາມຖືກຕ້ອງ , ຄົບຖ້ວນແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ, ຮັບຮອງບົດລາຍງານດັ່ງກ່າວ,

ຫລັງຈາກ ທ້າວໜ້າພະແນກບັນຊີ-ການເງິນລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 02 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຄິດເຫັນແຕ່ຢ່າງໃດ, ຈາກນັ້ນ ປະທານຈຶ່ງໄດ້ສະເໜີກອງປະຊຸມພິຈາລະນາ ແລະຮັບຮອງເອົາບົດລາຍງານການເງິນ ປີ 2017 ດ້ວຍຄະແນນສຽງຫລາຍກ່ວາເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ,

ພາຍຫຼັງກອງປະຊຸມພິຈາລະນາແລ້ວ ໄດ້ມີມະຕິ ດັ່ງນີ້ :

ມະຕິ : ກອງປະຊຸມເຫັນດີຮັບຮອງບົດລາຍງານການເງິນ ປີ 2017 ໂດຍມີຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ :

- ເຫັນດີໃບຈຳນວນ 35,387,900 ສຽງ ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3 : ພິຈາລະນາ ແລະຮັບຮອງທິດທາງການປັນຜົນ ປີ 2017

ຫົວໜ້າພະແນກບັນຊີ-ການເງິນ (ທ່ານ ຈ່າງຢົງ) ໄດ້ລະເໜີຕໍ່ທີ່ປະຊຸມ ພິຈາລະນາ ແລະຮັບຮອງ ກ່ຽວກັບທິດທາງການປັນຜົນປີ 2017 ດັ່ງມີລາຍລະອຽດໃນ **ເອກະສານຄັດຕິດ 04** ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ ແລະໄດ້ເປີດເຜີຍໃນເວັບໄຊຂອງ ຕະຫຼາດຫຼັກຊັບແລ້ວ ແລະກອງປະຊຸມສະພາບໍລິຫານໄດ້ຮັບຮອງຄວາມຖືກຕ້ອງ ,ຄົບຖ້ວນແລ້ວ,ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງທິດທາງການປັນຜົນ 2017,

ໂດຍກຳນົດວັນປິດທະບຽນຜູ້ຖືຮຸ້ນ ໃນວັນທີ 19/06/2018 ເພື່ອກຳນົດສິດຮັບເງິນປັນຜົນຂອງຜູ້ຖືຮຸ້ນບໍລິສັດ ຊີມັງລາວ ມະຫາຊົນ ປະຈຳປີ 2017 ແລະກຳນົດມື້ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນໃນວັນທີ 29/06/2018,

ຫລັງຈາກ ຫົວໜ້າພະແນກບັນຊີ-ການເງິນລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 03 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ,

• ການຖາມ-ຕອບ :

- **ຜູ້ຖືຮຸ້ນ** : ທ່ານ ໄກວັນ ກະດາວນ໌ດ ຜູ້ຖືຮຸ້ນຕ່າງປະເທດ ຂອງບໍລິສັດ ໄດ້ສະເໜີຕໍ່ກອງປະຊຸມຄື : ໃນເອກະສານລາຍງານກໍລະນີມີການກ່າວເຖິງອັດຕາແລກປ່ຽນຄວນລະບຸວັນເດືອນປີທີ່ກຳນົດອັດຕາແລກປ່ຽນ,
- **ຜູ້ຖືຮຸ້ນ** : ທ່ານ ກຽດຕິສັກ ໄດ້ຂໍຄວາມຄວາມກະຈ່າງແຈ້ງກ່ຽວກັບເນື້ອໃນທີ່ເຜີຍແຜ່ໄລຍະໂຄສະນາວ່າ: ຈະໄດ້ເປີກຈ່າຍເງິນປັນຜົນຈຳນວນ 240 ກີບ/ຮຸ້ນໃນໄລຍະ 3 ປີ (2018-2020),
- ຈາກນັ້ນກອງປະຊຸມ: ກໍໄດ້ຊີ້ແຈງຕໍ່ກັບຄຳຖາມທີ່ທ່ານຜູ້ຖືຮຸ້ນຂອງບໍລິສັດ ຄື :
  1) ກ່ອນອື່ນໄດ້ຂອບໃຈຕໍ່ຄຳສອບຖາມຄັ້ງກ່ອນ, ສ່ວນທີ່ບໍ່ໄດ້ກຳນົດອັດຕາແລກປ່ຽນກ່ຽວກັບເງິນປັນຜົນນັ້ນ ຍ້ອນວ່າການຈຳໜ່າຍຮຸ້ນຂອງບໍລິສັດໃນຜ່ານມາແມ່ນກຳນົດເປັນເງິນກີບ ແລະກຳນົດເງິນປັນຜົນກໍເປັນເງິນກີບເໝືອນກັນ,
  2) ກ່ຽວກັບການຄາດຄະເນເງິນປັນຜົນໃນໄລຍະ 3 ປີ ນັ້ນ ທາງບໍລິສັດຈະພະຍາຍາມທີ່ຈະປະຕິບັດໃຫ້ສຳເລັດຕາມແຜນຍຸດທະສາດທີ່ໄດ້ວາງໄວ້ໃນໜັງສືຊວນຊື້,

ຈາກນັ້ນ ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຕິນ ຫຼື ຂອບຖາມຕື່ມແລ້ວ ປະທານຈຶ່ງໄດ້ລະເໜີກອງປະຊຸມພິຈາລະນາ ແລະຮັບຮອງເອົາທິດທາງການປັນຜົນ ປີ 2017 ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງ ທີ່ເຂົ້າຮ່ວມກອງປະຊຸມ,

ກອງປະຊຸມພິຈາລະນາແລ້ວ ມີມະຕິ ດັ່ງນີ້ :

ມະຕິ : ກອງປະຊຸມເຫັນດີຮັບຮອງທິດທາງການປັນຜົນ ປີ 2017 ກອງປະຊຸມໄດ້ມີມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້ :

- ເຫັນດີຈຳນວນ 35,387,900 ສຽງ ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

ວາລະທີ 4 : ພິຈາລະນາ ແລະຮັບຮອງ ບົດລາຍງານແຜນການດຳເນີນທຸລະກິດຂອງ ບຊລ ປີ 2018

ຜູ້ອຳນວຍການ ບໍລິສັດ (ທ່ານ ຈາງລີ) ໄດ້ສະເໜີຕໍ່ທີ່ປະຊຸມ ພິຈາລະນາ ແລະຮັບຮອງກ່ຽວກັບບົດລາຍງານແຜນການດຳເນີນທຸລະກິດຂອງ ບຊລ ປີ 2018 ດັ່ງມີລາຍລະອຽດໃນ **ເອກະສານຄັດຕິດ 05** ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ໄດ້ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບ ແລະກອງປະຊຸມສະພາບໍລິຫານກໍໄດ້ຮັບຮອງຄວາມຖືກຕ້ອງ, ຄົບຖ້ວນແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມພິຈາລະນາ ແລະຮັບຮອງ,

ຫລັງຈາກ ຜູ້ອຳນວຍການ ບໍລິສັດ ລາຍງານໄຍຍະຫຍໍ້ ກ່ຽວກັບວາລະທີ 04 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ,

• ການຖາມ-ຕອບ :

- **ຜູ້ຖືຮຸ້ນ** : ທ່ານ ໄກວັນ ກະດາວາບິດ ຜູ້ຖືຮຸ້ນຕ່າງປະເທດ ຂອງບໍລິສັດ ໄດ້ສະເໜີຕໍ່ກອງປະຊຸມຄື : ສະເໜີໃຫ້ປັບປຸງເອກະສານບົດລາຍງານແຜນການດຳເນີນທຸລະບີ ປະຈຳປີ 2018 ໃຫ້ສອດຄ່ອງກັນລະຫວ່າງພາສາອັງກິດ ແລະພາສາລາວ,
- ຈາກນັ້ນ ຜູ້ອຳນວຍການ ບໍລິສັດ ບຊລ ກໍໄດ້ຊີ້ແຈງ ຄື :

1) ກ່ອນອື່ນໄດ້ຂອບໃຈຕໍ່ຄຳສະເໜີແນະດັ່ງກ່າວ ທັງເຫັນດີໃນການປັບປຸງເອກະສານທີ່ກ່ຽວຂ້ອງໃຫ້ຖືກຕ້ອງ ຕາມທີ່ຜູ້ຖືຮຸ້ນສະເໜີແນະ.

ຈາກນັ້ນ ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳເຫັນ ຫຼື ສອບຖາມຕື່ມແລ້ວ ປະທານຈຶ່ງໄດ້ສະເໜີກອງປະຊຸມພິຈາລະນາ ແລະຮັບຮອງ:ອົບບົດລາຍງານແຜນການດຳເນີນທຸລະກິດຂອງ ບຊລ ປີ 2018 ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ,

ພາຍຫຼັງກອງປະຊຸມພິຈາລະນາແລ້ວ ໄດ້ມີມະຕິ ດັ່ງນີ້ :

ມະຕິ : ກອງປະຊຸມເຫັນດີຮັບຮອງບົດລາຍງານແຜນການດຳເນີນທຸລະກິດຂອງ ບຊລ ປີ 2018 ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້ :

- ເຫັນດີຈຳນວນ 35,387,900 ສຽງ ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ,
- ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ,

ວາລະທີ 5 : ພິຈາລະນາ ແລະຮັບຮອງ ການວ່າຈ້າງບໍລິສັດກວດສອບພາຍນອກຈາກ EY ແຕ່ປີ 2018-2020

ຫົວໜ້າພະແນກບັນຊີ-ການເງິນ (ທ່ານ ຈ່າງ ຢົງຟ) ໄດ້ສະເໜີຕໍ່ທີ່ປະຊຸມພິຈາລະນາ ແລະຮັບຮອງ ກ່ຽວກັບ ການວ່າຈ້າງບໍລິສັດກວດສອບຈາກພາຍນອກແຕ່ປີ 2018-2020 ດັ່ງມີລາຍລະອຽດໃນ ເອກະສານຄັດຕິດ 06

ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ໄດ້ເປີດເຜີຍເອກະສານດັ່ງກ່າວໃນເວັບໄຊຂອງຕະຫຼາດຫຼັກຊັບ ແລະກອງປະຊຸມສະພາບໍລິຫານກໍໄດ້ຮັບຮອງຄວາມຖືກຕ້ອງ, ຄົບຖ້ວນແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງບົດລາຍງານດັ່ງກ່າວນີ້,

ຫລັງຈາກ ຫົວໜ້າພະແນກບັນຊີ-ການເງິນລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 05 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄັ້ນ,

- ການຖາມ-ຕອບ :

- ຜູ້ຖືຮຸ້ນ : ທ່ານ ໄກຈັບ ກະດາວານິດ ຜູ້ຖືຮຸ້ນຕ່າງປະເທດ ຂອງບໍລິສັດ ໄດ້ສະເໜີຕໍ່ກອງປະຊຸມຄື : ສະເໜີປັບປຸງບົດລາຍງານສະບັບພາສາອັງກິດ ໃຫ້ ຕົງກັບພາສາລາວ,
- ຈາກນັ້ນບໍລິສັດກໍໄດ້ຊີ້ແຈງຕໍ່ຂໍ້ສະເໜີ ຄື :

1, ກ່ອນອື່ນໄດ້ກ່າວຂອບໃຈຕໍ່ຄຳສະເໜີແນະດັ່ງກ່າວ ແລະເຫັນດີຈະປັບປຸງແກ້ໄຂເອກະສານທັງພາສາລາວ ແລະພາສາອັງກິດ ໃຫ້ສົມບູນຂຶ້ນຕາມການສະເໜີຂອງຜູ້ຖືຮຸ້ນ,

ຈາກນັ້ນ ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳເຫັນ ຫຼື ສອບຖາມຕື່ມແລ້ວ ປະທານຈຶ່ງໄດ້ສະເໜີກອງປະຊຸມພິຈາລະນາ ແລະຮັບຮອງເອົາ ການວ່າຈ້າງບໍລິສັດກວດສອບຈາກພາຍນອກ ແຕ່ປີ 2018-2020 ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ,

ຫຼັງຈາກກອງປະຊຸມພິຈາລະນາແລ້ວ ໄດ້ມີມະຕິ ດັ່ງນີ້ :

ມະຕິ : ກອງປະຊຸມເຫັນດີຮັບຮອງເອົາການວ່າຈ້າງບໍລິສັດກວດສອບຈາກພາຍນອກແຕ່ປີ 2018-2020 ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- ເຫັນດີຈຳນວນ 35,387,900 ສຽງ ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ,
- ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ,

ວາລະທີ 06 : ພິຈາລະນາການຮັບຮອງການສິ້ນສຸດວາລະຂອງກຳມະການສະພາບໍລິຫານ ທ່ານ ຈ້າວຊື່ (ຜູ່ເກົ່າ)

ຜູ້ອຳນວຍການ ບໍລິສັດ (ທ່ານ ຈ່າງລີ) ໄດ້ສະເໜີຕໍ່ທີ່ປະຊຸມ ພິຈາລະນາ ແລະຮັບຮອງກ່ຽວກັບ ການສິ້ນສຸດວາລະຂອງກຳມະການສະພາບໍລິຫານຊຸດກ່ອນຂອງທ່ານ ຈ້າວຊື່ຜູ້ເກົ່າ ເຊິ່ງໄດ້ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບ ແລະກອງປະຊຸມສະພາບໍລິຫານກໍໄດ້ຮັບຮອງຄວາມຖືກຕ້ອງ, ຄົບຖ້ວນແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມພິຈາລະນາ ແລະຮັບຮອງ ເຊິ່ງມີລາຍຊື່ດັ່ງລຸ່ມນີ້ :

ກຳມະການສະພາບໍລິຫານຊຸດກ່ອນ :

1.	ທ່ານ ຫຼີວເຫວີຍ	ປະທານສະພາບໍລິຫານ
2.	ທ່ານ ບຸນແປ່ງ ບົວພັນ	ຮອງປະທານສະພາບໍລິຫານ
3.	ທ່ານ ຈ້າວຊື່	ຮອງປະທານສະພາບໍລິຫານ
4.	ທ່ານ ຄຳປົນ ໄຊເລົ່າລົ່ງ	ກຳມະການສະພາບໍລິຫານ
5.	ທ່ານ ຈ່າງລີ	ກຳມະການສະພາບໍລິຫານ (ຜູ້ອຳນວຍການໃຫ່ຍ)

6. ທ່ານ ທອງປົນ	ກຳມະການສະພາບໍລິຫານ
7. ທ່ານ ເຈົ້ຍຢ້າວຊີ	ກຳມະການສະພາບໍລິຫານ
8. ທ່ານ ສົງວເຈ	ກຳມະການອົດສະຫຼະ
9. ທ່ານ ຫຼີຊຸນໄປ	ກຳມະການອົດສະຫຼະ
10. ທ່ານ ວິງວິຈິດ ແກ້ວວິງກິດ	ກຳມະການອົດສະຫຼະ

ຫລັງຈາກ ຜູ້ອຳນວຍການ ບໍລິສັດ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 06 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຄິດເຫັນແຕ່ຢ່າງໃດ, ຈາກນັ້ນ ປະທານຈຶ່ງໄດ້ສະເໜີກອງປະຊຸມພິຈາລະນາ ແລະ ຮັບຮອງເອົາການສິ້ນສຸດວາລະຂອງກຳມະການສະພາບໍລິຫານຊຸດກ່ອນດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ,

ພາຍຫຼັງກອງປະຊຸມພິຈາລະນາແລ້ວ ໄດ້ມີມະຕິ ດັ່ງນີ້ :

ມະຕິ : ກອງປະຊຸມເຫັນດີຮັບຮອງການສິ້ນສຸດວາລະຂອງກຳມະການສະພາບໍລິຫານ ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້ :

- ເຫັນດີຈຳນວນ 35,387,900 ສຽງ ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ,
- ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ,

ວາລະທີ 7 : ພິຈາລະນາ ແລະຮັບຮອງການແຕ່ງຕັ້ງກຳມະການສະພາບໍລິຫານ

ຜູ້ອຳນວຍການ ບໍລິສັດ (ທ່ານ ຈ່າງລີ) ໄດ້ສະເໜີຕໍ່ທີ່ປະຊຸມ ພິຈາລະນາ ແລະຮັບຮອງ ກ່ຽວກັບ ການແຕ່ງຕັ້ງກຳມະການສະພາບໍລິຫານ ຕັ້ງມີລາຍລະອຽດໃນ ເອກະສານຄັດຕິດ 07 ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ໄດ້ເປີດເຜີຍເອກະສານດັ່ງກ່າວໃນເວັບໄຊ ຂອງຕະຫຼາດຫຼັກຊັບ ແລະ ກອງປະຊຸມສະພາບໍລິຫານກໍໄດ້ຮັບຮອງຄວາມຖືກຕ້ອງ,ຄົບຖ້ວນແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງເອົາການແຕ່ງຕັ້ງດັ່ງກ່າວ ເຊິ່ງມີລາຍຊື່ດັ່ງລຸ່ມນີ້ :

ກຳມະການສະພາບໍລິຫານຊຸດໃໝ່ :

1. ທ່ານ ຫຼີວເຫວີຍ	ປະທານສະພາບໍລິຫານ
2. ທ່ານ ບຸນແປ ປົວພັນ	ຮອງປະທານສະພາບໍລິຫານ
3. ທ່ານ ຈ່າງລີ້	ກຳມະການສະພາບໍລິຫານ
4. ທ່ານ ຫຼີໜິງ	ກຳມະການສະພາບໍລິຫານ
5. ທ່ານ ຄຳບົນ ໄຊເລົ່າວົງ	ກຳມະການສະພາບໍລິຫານ
6. ທ່ານ ທອງປົນ ກ່ຽງຄຳເພັດ	ກຳມະການສະພາບໍລິຫານ
7. ທ່ານ ເຈົ້ຍຢ້າວຊີ	ກຳມະການສະພາບໍລິຫານ
8. ທ່ານ ສົງວເຈ	ກຳມະການອົດສະຫຼະ
9. ທ່ານ ຫຼີຊຸນໄປ	ກຳມະການອົດສະຫຼະ
10. ທ່ານ ວິງວິຈິດ ແກ້ວວິງກິດ	ກຳມະການອົດສະຫຼະ

ຫລັງຈາກ ຜູ້ອຳນວຍການ ບໍລິສັດ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 07 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ.

• ການຖາມ-ຕອບ :

- ຜູ້ຖືຮຸ້ນ : ທ່ານ ໄກອ້ອນ ກະດາອຳນິດ ຜູ້ຖືຮຸ້ນຕ່າງປະເທດ ຂອງບໍລິສັດ ໄດ້ສະເໜີຕໍ່ກອງປະຊຸມຄື : ສະເໜີໃຫ້ປັບປຸງແກ້ໄຂເອກະສານຊີວະປະຫວັດຂອງກຳມະການຊຸດໃໝ່ທີ່ເປັນພາສາອັງກິດໃຫ້ຖືກກັບພາສາລາວ

ລວມທັງ,

- ຈາກນັ້ນບໍລິສັດກໍໄດ້ຊີ້ແຈງຄື : ຕໍ່ກັບຄຳຖາມທີ່ທ່ານຜູ້ຖືຮຸ້ນຂອງບໍລິສັດ ທ່ານຜູ້ດຳເນີນກອງປະຊຸມໄດ້ມີຄຳເຫັນຄື :

1, ກ່ອນອື່ນໄດ້ກ່າວຂອບໃຈຕໍ່ຄຳສະເໜີແນະດັ່ງກ່າວ ແລະເຫັນດີຈະປັບປຸງແກ້ໄຂເອກະສານພາສາລາວໃຫ້ຄືກັບພາສາອັງກິດ ຕາມການສະເໜີຂອງຜູ້ຖືຮຸ້ນ,

ຈາກນັ້ນ ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳເຫັນ ຫຼື ສອບຖາມຕື່ມແລ້ວ ປະທານຈຶ່ງໄດ້ສະເໜີກອງປະຊຸມພິຈາລະນາ ແລະຮັບຮອງເອົາການແຕ່ງຕັ້ງກຳມະການສະພາບໍລິຫານ ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ,

ພາຍຫຼັງກອງປະຊຸມພິຈາລະນາແລ້ວ ໄດ້ມີມະຕິ ດັ່ງນີ້ :

ມະຕິ : ກອງປະຊຸມເຫັນດີຮັບຮອງການແຕ່ງຕັ້ງກຳມະການສະພາບໍລິຫານ ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້ :

- ເຫັນດີຈຳນວນ 35,387,900 ສຽງ ເທົ່າກັບ 100 ລ້ອນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ,
- ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 ລ້ອນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ,

ຫລັງຈາກກອງປະຊຸມໄດ້ພິຈາລະນາ ແລະຮັບຮອງຄົບວາລະການປະຊຸມແລ້ວ, ປະທານກອງປະຊຸມໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນ ຫຼືມີຄຳຖາມ, ແຕ່ບໍ່ມີຜູ້ຖືຮຸ້ນໃດມີຄຳເຫັນ ຫຼືມີຄຳຖາມແຕ່ຢ່າງໃດ,

ຈາກນັ້ນປະທານກອງປະຊຸມໄດ້ກ່າວຂອບໃຈຄະນະປະທານ, ຜູ້ຖືຮຸ້ນ, ກຳມະການສະພາບໍລິຫານ ແລະແຂກທີ່ມີກຽດທຸກທ່ານ ພ້ອມກ່າວປິດກອງປະຊຸມໃນເວລາ 17,00 ໂມງ ຂອງວັນດຽວກັນ,

ປະທານກອງປະຊຸມ

ຫຼີວເຫວີຍ

ຜູ້ບັນທຶກ

ຈ້າວ ຊິ້ງເສີ່ງ

ໝາຍເຫດ : ບົດບັນທຶກລະບັບນີ້ໃຫ້ຖືເອົາສະບັບພາສາລາວເປັນຫຼັກ

ເອກະສານຄັດຕິດ 2 :

ບົດລາຍງານຜົນການດຳເນີນ
ທຸລະກິດຂອງບໍລິສັດ ຊີມັງລາວ ມະຫາຊົນ ປີ 2017

ບັນດາທ່ານຜູ້ຖືຮຸ້ນທີ່ນັບຖື

ຂ້າພະເຈົ້າໃນນາມຕາງໜ້າຄະນະບໍລິຫານ ບໍລິສັດ ຂໍລາຍງານວຽກງານປະຈຳປີ 2017 ຕໍ່ກອງປະຊຸມສະພາບໍລິຫານ ເພື່ອໃຫ້ກອງປະຊຸມໄດ້ພິຈາລະນາຕາມເນື້ອໃນ ດັ່ງນີ້ :

ປີ 2017 ໄດ້ສຳເລັດການຜະລິດຊີມັງ 250.000 ໂຕນ, ຈຳໜ່າຍ 250.000 ໂຕນ, ຜ່ານການກວດສອບຂອງພາຍນອກ ສາມາດສ້າງລາຍຮັບໄດ້ທັງໝົດ 15,768 ລ້ານໂດລາ, ສ້າງກຳໄລໄດ້ 1,268 ລ້ານໂດລາ ຊຶ່ງໄດ້ສຳເລັດຄົບຄາດໝາຍທີ່ກອງປະຊຸມສະພາບໍລິຫານກຳນົດໃຫ້.

I. ຜົນສຳເລັດໃນການປະຕິບັດໄດ້ໃນ ປີ 2017 ມີດັ່ງນີ້ :

1. ກຳແໜ້ນໂອກາດທາງການຕະຫຼາດ, ສູ້ຊົນຍາດແຍ່ງຜົນສຳເລັດໃໝ່

1) ຍ້ອນມອາໃສທ່າແຮງທາງດ້ານຍີ່ຫໍ້ຜະລິດຕະພັນ ແລະ ເງື່ອນໄຂດ້ານທີ່ຕັ້ງທີ່ເອື້ອອຳນວຍ ຈຶ່ງໄດ້ສຳເລັດການ ເຊັນສັນຍາຊື້-ຂາຍຊີມັງກັບໂຄງການທາງລົດໄຟ ລາວ-ຈີນ ຈຶ່ງສາມາດເພີ່ມປະລິມານການຈຳໜ່າຍໄດ້ເຖິງ 39% .

2) ເພີ່ມທະວີວຽກການຄຸ້ມຄອງ - ບໍລິຫານ ເພື່ອຫຼຸດຜ່ອນພະລັງງານ. ໂດຍປັບປຸງແກ້ໄຂການຄວບຄຸມລະບົບເຄື່ອງຈັກ ແລະການຜະລິດ ເພື່ອເພີ່ມອັດຕາການເຮັດວຽກຂອງເຕົ່ອງຈັກ ຈຶ່ງເຮັດໃຫ້ຕົ້ນທຶນຊີມັງຫຼຸດລົງ 4,1%.

3) ສູ້ຊົນການແກ້ໄຂປັບປຸງໃນແຕ່ລະດ້ານ ໂດຍປັບປຸງສ່ວນປັນຈຸຊີມັງ ເພື່ອອຳນວຍຄວາມສະດວກໃນການປັນຈຸ ແລະການລະບາຍວ່ອງໄວຂຶ້ນ.

4) ສູ້ຊົນຮັບປະກັນຄຸນນະພາບໃຫ້ເປັນປົກກະຕິ ແລະ ຕອບສະໜອງໄດ້ຕາມຄຸນນະພາບທີ່ລູກຄ້າຕ້ອງການ.

5) ຄຸ້ມຄອງການເງິນໂດຍມີການປັບປຸງວຽກງານການເງິນທຸກພາກສ່ວນໃຫ້ມີຄວາມຊັດເຈນຂຶ້ນ ທັ້ງມີຄວາມເອົ້ມງວດສູງຕໍ່ວຽກງານວິເຄາະດ້ານເສດຖະກິດ, ປັບປຸງລະບົບຄຸ້ມຄອງເງິນໝຸນວຽນ ແລະການນຳໃຊ້ໃຫ້ດີຈົນເຮັດໃຫ້ເງິນກູ້ຫຼຸດລົງ 39%, ລາຍຈ່າຍການເງິນຫຼຸດລົງ 25 %, ອັດຕາຊັບສິນຕໍ່ໜີ້ສິນຫຼຸດລົງເປັນ 42 %.

2. ຮີບຮ້ອນໃນການປັບປຸງ ເພື່ອສັກຄັ້ນການພັດທະນາຢ່າງຕໍ່ເນື່ອງ

1) ສັກຄັ້ນວຽກງານເຂົ້າຕະຫຼາດຫຼັກຊັບ ເພື່ອລະດົມເງິນທຶນ. ໂດຍພາຍໃຕ້ການສະໜັບສະໜຸນ ຈາກຂາຮຸ້ນທັງ 02 ຝ່າຍ, ໃນວັນທີ 09/02/2018 ສຳເລັດການອອກຈຳໜ່າຍຮຸ້ນ, ວັນທີ 02/03/2018 ສຳເລັດການຈົດທະບຽນໃນຕະຫຼາດຫຼັກຊັບ ຊຶ່ງສາມາດລະດົມເງິນທຶນໄດ້ທັງໝົດ 28,8 ຕື້ກວ່າກີບ ເທົ່າກັບ 3,47 ລ້ານໂດລາ ຊຶ່ງຈະເປັນທຶນໃນການພັດທະນາໃນຕໍ່ໜ້າ.

2) ການພັດທະນາໃນໂຄງການບໍ່ຫີນປູນ : ຜ່ານການຮ່ວມມືກັບຂາຮຸ້ນສາມາດເຮັດສຳເລັດໂຄງ ການບໍ່ຫີນປູນ, ທ້າຍປີ 2017 ສຳເລັດວຽກງານການຕິດຕັ້ງເຄື່ອງຈັກທັງໝົດ ແລະດຳເນີນການ ຜະລິດ ຊຶ່ງສາມາດຫຼຸດຜ່ອນຕົ້ນທຶນຫີນປູນໄດ້ປະມານ 10%.

3) ໄດ້ສືບຕໍ່ວຽກງານການສຳຫຼວດບໍ່ຖ່ານຫີນ:ໄດ້ສຳເລັດການສ້າງແລວທາງເຂົ້າຫາບໍ່ໄລຍະ10Km, ສຳເລັດວຽກງານການຊີ້ເຈາະຈຳນວນນຶ່ງ ພ້ອມໄດ້ເກັບກຳຂໍ້ມູນລາຍລະອຽດ ແລ້ວຍື່ນຕໍ່ພາກ ສ່ວນທີ່ກ່ຽວຂ້ອງຂອງລັດຖະບານ ທັງໄດ້ຮັບອະນຸຍາດສືບຕໍ່ສຳຫຼວດໄລຍະ 03 ປີ.

3. ປັບປຸງດ້ານວຽກງານຄຸ້ມຄອງ ISO ເພື່ອເພີ່ມທະວີວຽກງານການຄຸ້ມຄອງ- ບໍລິຫານ

ປີ 2017 ໄດ້ສຳເລັດການປັບປຸງມາດຕະຖານໄປເປັນລະບົບ ISO 9001:2015 ບໍລິສັດໄດ້ ເຂັ້ມງວດໃນການປະຕິບັດກົດໝາຍ, ທັງຍົກຂັ້ນຕ່ຳຂອງຂາຮຸ້ນທັງສອງຝ່າຍ, ເພີ່ມທະວີ ລະບຽບຄຸ້ມຄອງ ແລະນະໂຍບາຍແບບລວມສູນປະຊາທິປະໄຕ, ຜັກດັນວຽກງານທີ່ຂັ້ນເທິງ ຊັ້ນຳ ແລະ ຄຸ້ມຄອງສິດປະຊາທິປະໄຕຂອງມະຫາຊົນ ເພື່ອສຳເລັດໃຫ້ການຕົກລົງໃນບັນຫາ ສຳຄັນຕ່າງໆມີວິທະຍາສາດ, ຄວບຄຸມເຮັດໃຫ້ວຽກງານສະໜອງ, ການຜະລິດ ແລະຈຳໜ່າຍ ສອດຄ່ອງລະບຽບກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງ.

4. ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານສຸຂະພາບ,ສະພາບແວດລ້ອມ, ຄວາມປອດໄພ ແລະປະຕິບັດ ຄວາມຮັບຜິດຊອບຕໍ່ສັງຄົມ

1. ວຽກງານສຸຂະພາບ ແລະການຜະລິດປອດໄພ: ໄດ້ຖືເອົາການສະສາງ ແລະແກ້ໄຂວັດຖຸລະເບີດ ງ່າຍ, ໄວໄຟທີ່ຍົກຍ້ອນເປັນສຳຄັນ, ໄດ້ມີການກວດກາຢ່າງຮອບດ້ານ ກ່ຽວກັບການເກັບມ້ຽນ ແລະການນຳໃຊ້ວັດຖຸເຄມີທີ່ມີຄວາມສ່ຽງ ແລະ ວັດຖຸໄວໄຟ, ຄຸ້ມຄອງໃຫ້ດີບັນຫາທີ່ກ່ຽວກັບ ຄວາມຮ້ອນ, ຄວາມດັນ ແລະອື່ນໆ.

2. ເຂັ້ມງວດໃນການຮັກສາສະພາບແວດລ້ອມ:ໂຮງງານໄດ້ຮັບປະກັນການຄວບຄຸມການປ່ອຍຝຸ່ນ ແລະມົນລະພິດໃຫ້ໄດ້ຕາມມາດຖານຊຶ່ງຜ່ານມາກໍ່ໄດ້ຮັບການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ ຂອງລັດ.

3. ການປະຕິບັດຄວາມຮັບຜິດຊອບຕໍ່ສັງຄົມ: ໄດ້ລົງທຶນສ້ອມແປງເສັ້ນທາງ ແລະ ຂົວ, ຊ່ວຍສ້ອມແປງໂຮງຮຽນ,ໂຮງໝໍ ແລະສະຖານທີ່ສາທາລະນຸປະໂພກຕ່າງໆ ໃຫ້ການຝຶກອົບຮົມແກ່ພະນັກງານລາວທາງດ້ານວຽກງານການຄຸ້ມຄອງ, ດ້ານເຕັກນິກ ແລະອື່ນໆ, ຕ້ອນຮັບການຢ້ຽມຢາມຂອງການນຳພັກ - ລັດ ແລະສັງຄົມ, ຈຶ່ງໄດ້ຮັບການຕອບແທນ ແລະສະໜັບສະໜູນ ຈາກສັງຄົມຢ່າງເອົາໃຈໃສ່.

ນະຄອນຫລວງວຽງຈັນ, ວັນທີ 22 MAY 2018

ບໍລິສັດ ຊີມັງລາວ ມະຫາຊົນ

ບໍລິສັດ
ຊີມັງລາວ ມະຫາຊົນ
Lao Cement Public Company

ເອກະສານຄັດຕິດ 3 :

ບົດລາຍງານ

ວຽກງານການເງິນຂອງ Lcc ປະຈຳປີ 2017

ຕາມເອກະສານກວດສອບພາຍນອກ

ບໍລິສັດ ຊີ[illegible] ມະຫາຊົນ

ໃນຂອບງົບປະມານການເງິນ
ປະຈຳປີ ສິ້ນສຸດ ວັນທີ 31 ທັນວາ 2017

	ໝາຍເຫດ ຂໍ້	31 ທັນວາ 2017 ກີບ	31 ທັນວາ 2016 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ເງິນຝາກ	4	35,642,584,964	43,715,184,462
ລູກໜີ້ ການຄ້າ	5	4,917,773,226	3,209,797,418
ລູກໜີ້ ອື່ນ		325,548,475	328,548,475
ເງິນຝາກ ທີ່ມີຂໍ້ຈຳກັດ	6	431,370,000	494,440,000
ລວມຊັບສິນໝຸນວຽນ		**40,720,325,366**	**47,747,960,373**
ຊັບສິນບໍ່ໝຸນວຽນ			
ເງິນລົງທຶນ ໃນບໍລິສັດຮ່ວມ		149,139,500	198,773,380
ເຄື່ອງໃຊ້	7	30,841,860,999	37,222,616,127
ທີ່ດິນ ແລະ ອາຄານ		18,567	18,079,897
ເງິນລ່ວງໜ້າ ໃຫ້ຜູ້ຮັບເໝົາ		1,398,553,854	2,281,797,454
ທີ່ດິນ ແລະ ອຸປະກອນ	8	42,081,522,477	28,418,067,754
ເງິນຝາກ	9	71,479,523,928	9,045,254,954
ລວມຊັບສິນໝຸນວຽນ		**85,814,606,286**	**78,166,478,736**
ລວມຊັບສິນທັງໝົດ		**126,534,932,520**	**126,914,439,109**
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ເຈົ້າໜີ້ ການຄ້າ		10,284,385,490	7,358,516,251
ເງິນລ່ວງໜ້າ ຈາກລູກຄ້າ		164,773,000	413,328,740
ເຈົ້າໜີ້ ເງິນໃຫ້ກູ້ ຈາກສະຖາບັນການເງິນ	25	3,161,212,698	3,614,996,583
ເງິນກູ້	10	12,107,160,240	18,776,340,400
ເງິນປະກອບສ່ວນ	11	7,184,164,148	4,143,013,162
ເຈົ້າໜີ້ ອື່ນ ໃຫ້ລະບົບການ		878,478,313	-
ເງິນຝາກ ຂອງລູກຄ້າ ແລະ ເຈົ້າໜ້າທີ່	12	5,560,508,515	8,002,065,057
ເຈົ້າໜີ້ ອື່ນໆ	13	15,312,346,770	23,609,865,143
ລວມໜີ້ສິນໝຸນວຽນ		**54,301,011,474**	**56,318,900,136**
ລວມໜີ້ສິນທັງໝົດ		**54,301,011,474**	**56,318,900,136**

ບັນທຶກເພີ່ມເຕີມ ໝາຍເລກ 1 ຫາ 25 ແມ່ນເປັນສ່ວນປະກອບ ຂອງເອກະສານ ນີ້

ບໍລິສັດ ຊີເມັນລາວ ເມຍາຊີ

ໂອນຍາຍຖານະທາງການເງິນ (ຕໍ່)
ແລ້ວທີ 31 ທັນວາ 2017

	ໝາຍເຫດ	31 ທັນວາ 2017 ກີບ	31 ທັນວາ 2016 ກີບ
ທຶນ			
ທຶນຈົດທະບຽນ ແລະ ທຶນທີ່ຊຳລະແລ້ວ	14	14,031,400,000	3,031,150,001
ສ່ວນເກີນມູນຄ່າຫຸ້ນ		18,600,000	-
ຕົ້ນທຶນ ແລະ ມູນຄ່າ		8,800,504,594	8,220,227,682
ຕົ້ນທຶນ ແລະ ມູນຄ່າ		17,194,276,113	16,323,728,614
ກຳໄລສະສົມ		34,325,887,134	33,420,432,358
ລວມທຶນ		72,383,621,748	59,995,538,983
ລວມທຶນ ແລະ ໜີ້		126,634,832,882	125,914,439,198

ບໍລິສັດ ຊີເມັນ ເມຍາຊີ Lao Cement Public Company

ຜູ້ອຳນວຍການໃຫຍ່

ທ້າວ ຈາງ ປິ່ງ
ຜູ້ຊ່ວຍຜູ້ອຳນວຍການ - ການເງິນ

10 ເມສາ 2018

ຕ້ອງອ່ານພ້ອມກັບໝາຍເຫດ 1 ຫາ 35 ທີ່ແນບມາກັບການລາຍງານທາງການເງິນສະບັບນີ້

บริษัท ซิบังลาว มหาชน

งบกระแสเงินสดสำหรับงวด
สิ้นสุดวันที่ธันวาคม ๓๑ ตัวเลขเป็นพัน

	หมายเหตุ	2017 กีบ	2016 กีบ
กระแสเงินสดจากกิจกรรม	15	130,518,309,356	101,237,741,674
ต้นทุนในการดำเนินงาน	16	(106,047,162,623)	(82,016,611,712)
กระแสเงินสดจากการดำเนินงาน		24,466,146,744	19,221,129,962
กระแสเงินสดจากกิจกรรมลงทุน	17	68,036,087	841,043,951
เงินกระดันกู้ยืมจากธนาคาร		(1,021,648,000)	(1,052,276,360)
ดอกเบี้ยจ่ายและค่าธรรมเนียม	18	(3,192,540,236)	(2,147,661,995)
กระแสเงินสดจากกิจกรรมจัดหาเงิน	19	(6,251,641,332)	(7,766,365,832)
กำไรจากการดำเนินงาน		11,849,057,863	9,453,849,906
กระแสเงินสดจากกิจกรรมลงทุน	20	848,824,921	138,337,485
ภาษีเงินได้จ่าย	21	(2,047,693,028)	(1,930,216,754)
กำไรสุทธิของงวดนี้		10,499,668,956	7,656,971,615
ดอกเบี้ยจ่าย	22	(1,895,544,191)	(2,245,064,837)
		8,604,124,764	5,410,906,778

บริษัท ซิบังลาว มหาชน
Lao Cement Public Company

ผู้อำนวยการใหญ่

ผู้จัดการแผนกบัญชี - การเงิน

10 เมษายน 2018

บริษัท ซีโนไทย เอ็นยิเนียริ่ง

งบการเปลี่ยนแปลงส่วนของผู้ถือหุ้นรวม
สำหรับปีสิ้นสุดวันที่ 31 มีนาคม 2567

ບໍລິສັດ ຊີເມັ້ນລາວ ມະຫາຊົນ

ໃບລາຍງານທາງການເງິນ
ສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2017

	ເງື່ອນໄຂ	2017	2016
	ເລກທີ	ກີບ	ກີບ
ກະແສເງິນສົດຈາກກິດຈະກໍາດໍາເນີນງານ			
ກໍາໄລກ່ອນອາກອນ		10,499,888,995	7,866,071,616
ດອກເບ້ຍຈ່າຍ			
ຄ່າເສື່ອມລາຄາ		8,211,566,167	8,143,140,856
ກໍາໄລ/ຂາດທຶນຈາກອັດຕາແລກປ່ຽນ		-	(1,259,419,328)
ປັນຜົນຮັບ		1,031,846,030	1,062,278,980
ຄ່າເສື່ອມລາຄາ/ຈ່າຍຕັດຈໍາໜ່າຍ		37,348,731	(2,459,008)
ດອກເບ້ຍຮັບ		-	(136,903,565)
ລາຍຈ່າຍອື່ນ		1,820,821,482	1,691,172,205
ກະແສເງິນສົດຈາກກິດຈະກໍາດໍາເນີນງານ ກ່ອນການປ່ຽນແປງ		21,251,361,205	17,974,904,360
ເພີ່ມ/ຫຼຸດລົງຂອງລູກໜີ້ ແລະ ເງິນຈ່າຍລ່ວງໜ້າ		(12,053,751,383)	(7,790,218,967)
ສິນຄ້າ		7,137,814,528	5,201,769,168
ເພີ່ມ/ຫຼຸດລົງຂອງເຈົ້າໜີ້ ແລະ ເງິນຮັບລ່ວງໜ້າ			
ອື່ນໆ		2,889,916,456	(6,623,869,700)
ລາຍຈ່າຍຜົນປະໂຫຍດ		(1,950,821,482)	(1,691,172,205)
ພາສີຈ່າຍ		(3,855,847,606)	(1,886,449,270)
ກະແສເງິນສົດສຸດທິຈາກກິດຈະກໍາດໍາເນີນງານ		13,218,420,805	4,436,868,846
ກະແສເງິນສົດຈາກກິດຈະກໍາລົງທຶນ			
ຊື້ຊັບສິນຄົງທີ		(1,803,631,647)	(8,376,432,450)
ລາຍຮັບຈາກການ		-	135,903,565
ກະແສເງິນສົດສຸດທິໃຊ້ໃນກິດຈະກໍາການລົງທຶນ		(1,803,631,647)	(8,240,528,875)
ກະແສເງິນສົດຈາກກິດຈະກໍາການເງິນ			
ຊໍາລະເງິນກູ້		(1,305,522,000)	-
ລາຍຮັບເງິນສົດ		21,140,060,240	27,043,446,400
ເງິນປັນຜົນຈ່າຍ		(28,903,245,400)	(24,748,100,000)
ກະແສເງິນສົດສຸດທິ(ໃຊ້ໄປ)/ຈາກກິດຈະກໍາການ		(9,068,707,160)	2,295,346,400
ເພີ່ມ/ຫຼຸດລົງສຸດທິ		2,455,163,598	1,459,675,573
ເງິນສົດ		9,045,254,584	7,552,144,583
ຜົນກະທົບຈາກອັດຕາແລກປ່ຽນ		(20,894,334)	2,435,005
ເງິນສົດປາຍ	9	11,479,523,828	9,045,254,284

ບໍລິສັດ ຊີເມັ້ນລາວ ມະຫາຊົນ
Lao Cement Public Company

ຜູ້ອໍານວຍການໃຫຍ່

ຫົວໜ້າ ການເງິນ
ຜູ້ຊ່ວຍຜູ້ອໍານວຍການໃຫຍ່ - ການເງິນ

ວັນທີ 22 MAY 2018

ນະຄອນຫລວງວຽງຈັນ, ວັນທີ 22 MAY 2018

ບໍລິສັດ ຊີເມັ້ນລາວ ມະຫາຊົນ

ຊີເມັ້ນລາວ ມະຫາຊົນ
Lao Cement Public Company

ເອກະສານຄັດຕິດ 4:

ບົດລາຍງານ

ວ່າດວ້ຍເງິນປັນຜົນ

- ອີງຕາມຜົນການກວດສອບຂອງບໍລິສັດກວດສອບພາຍນອກ,ການປຶກສາຫາລື ແລະ ຕົກລົງເປັນເອກະພາບເບື້ອງຕົ້ນຂອງກອງປະຊຸມສະພາບໍລິຫານ LCC ຄັ້ງວັນທີ 30/04/2018.

ໂດຍອີງຕາມຜົນການກວດສອບຂອງ ບໍລິສັດກວດສອບພາຍນອກ ເຫັນວ່າມີກຳໄລທັງໝົດ 10,499,668,955 ກີບ ເທົ່າກັບ 1,268,535.58 ໂດລາ, ຫລັງຈາກຫັກອາກອນກຳໄລ ແລະກອງທຶນຕ່າງໆອອກແລ້ວຍັງເຫຼືອ 5,033,412,987 ກີບ ເທົ່າກັບ 608,120.45 ໂດລາ ຊຶ່ງມີລາຍລະອຽດ ດັ່ງນີ້ :

ລາຍການ	ເງິນກີບ	ເງິນໂດລາ
ຕົວເລກກຳໄລ	10,499,668,955	1,268,535.58
ອາກອນກຳໄລ	1.895.544.191	229,013.43
ກຳໄລຫລັງອາກອນ	8,604,124,764	1,039,522.14
ລ້ຽງເງິນແຮ	3,011,443,667	363,832.75
ຈຳນວນເງິນປັນຜົນ	5,592,681,097	675,689.39
ອາກອນປັນຜົນ	559,268.110	67,568.94
ເງິນປັນຜົນຕົວຈິງ	5,033,412,987	608,120.45

ບໍລິສັດສຳເລັດການເຜີຍແຜ່ຂໍ້ມູນຄັ້ງທຳອິດໃນວັນທີ 20 / 10 / 2017, ສຳເລັດການອອກຈຳໜ່າຍຮຸ້ນໃນວັນທີ 09 / 02 / 2018 ແລະ ສຳເລັດການຈົດທະບຽນໃນຕະຫຼາດຫລັກຊັບ ໃນວັນທີ 2/03/2018,

ອີງຕາມທິດຊີ້ນຳຂອງສຳນັກງານ ຄຄຊ ແລະ ພິຈາລະນາເຖິງການພັດທະນາໃນຕໍ່ໜ້າ, ຮັກສາພາບພົດຂອງບໍລິສັດ, ສ້າງຄວາມໝັ້ນໃຈໃຫ້ຕະຫລາດ ແລະຮັບປະກັນລາຄາຮຸ້ນຈຶ່ງສະເໜີປັນຜົນກຳໄລປີ 2017 ໃຫ້ຂາຮຸ້ນທັງໝົດບໍ່ຕ່ຳກວ່າ 50% ຂອງເງິນກຳໄລທີ່ສາມາດແບ່ງປັນ ດັ່ງນັ້ນ, ຈຶ່ງສະເໜີພິຈາລະນາປັນຜົນໂດຍກຳນົດເງິນປັນຜົນ 63 ກີບ/ຮຸ້ນ ຊຶ່ງມີຈຳນວນ ແບ່ງປັນທັງໝົດ (63 ກີບ x 40.004.000 ຮຸ້ນ = 2.520.252.000 ກີບ) ເທົ່າກັບ 304,000 ແສນໂດລາ,ສ່ວນທີ່ເຫຼືອແມ່ນເກັບຮັກສາໄວ້ໃນ ບັນຊີລໍຖ້າ ສະພາບການເງິນມີຄວາມຄ່ອງຕົວຂຶ້ນຈຶ່ງພິຈາລະນາແບ່ງປັນອີກ.

ຕາຕະລາງເງິນປັນຜົນປີ 2018

ຮາຮຸ້ນແລະສັດສ່ວນຮຸ້ນ	ເງິນກີບ	ເງິນໄດລາ
CYC 35,6964%	899,640,000.00	108,691.55
DAI 34,2966%	864,360,000.00	104,429.14
7 ທ່ານ : 0,007%	176,400.00	21.31
ມວນຊົນທົ່ວໄປ 30%	756,075,600.00	91,346.57
ລວມ :	2,520,252,000.00	304,488.58

ທິດທາງການປັນຜົນຂ້າງເທິງນີ້ແມ່ນກຳນົດເອົາວັນທີ 19/06/2018 ເປັນມື້ລົງທະບຽນ ແລະ ຈະໂອນ ເຂົ້າບັນຊີໃນວັນທີ 29/06/2018 ດັ່ງນັ້ນ, ຈຶ່ງສະເໜີກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາ.

ນະຄອນຫລວງວຽງຈັນ, ວັນທີ 22 MAY 2018

ບໍລິສັດ ຊີມັງລາວ ມະຫາຊົນ

ບລສ
ຊີມັງລາວ ມະຫາຊົນ
Lao Cement Public Company

ເອກະສານຄັດຕິດ 5 :

ບົດລາຍງານ

ແຜນການດຳເນີນທຸລະກິດຂອງ ບຊລ ປະຈຳປີ 2018

- ອີງຕາມການຕົກລົງເປັນເອກະພາບຂອງສະພາບໍລິຫານ ຄັ້ງວັນທີ 30/04/2018 ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ ຕາມເປົ້າໝາຍດັ່ງນີ້ :

ປີ	ກະລິງເກີ	ຊີມັ້ງ	ກຳໄລ
2016	177.000	180.000	0,888 ລ້ານ$
2017	200.200	250.000	1,26 ລ້ານ$
2018	200.000	220.000	1 ລ້ານ$

ຮັບຂຶ້ນສຸດທ້າຍໃຫ້ເພີ່ມຂຶ້ນ 9%.

ສຳເລັດການປັບປຸງດ້ານເຕັກນິກຂອງໂຮງງານໃນໄລຍະທີ່ໜຶ່ງຄື : ປັບປຸງໝໍ້ແປງ ອິນເວີເຕີ້ຢູ່ຈັກ ລະບາຍລົມຂອງ ຈັກປົດວັດຖຸດິບ ແລະ ຈັກປົດຊີມັ້ງ.

ດັ່ງນັ້ນ, ຈຶ່ງສະເໜີກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະຮັບຮອງ.

ນະຄອນຫລວງວຽງຈັນ, ວັນທີ 22 MAY 2018

ບໍລິສັດ ຊີມັ້ງລາວ ມະຫາຊົນ

ບໍລິສັດ ຊີມັ້ງລາວ ມະຫາຊົນ
Lao Cement Public Company

ເອກະສານຄັດຕິດ 6 :

ບົດລາຍງານ

ວ່າດ້ວຍການວ່າຈ້າງບໍລິສັດກວດສອບບັນຊີຈາກພາຍນອກ EY

- ອີງຕາມລະບຽບການທີ່ກ່ຽວຂ້ອງ.
- ອີງຕາມການປຶກສາຫາລື ແລະ ຕົກລົງເປັນເອກະພາບຂອງກອງປະຊຸມສະພາບໍລິຫານ ບຊລ ຄັ້ງວັນທີ 30/04/2018 ຈຶ່ງນຳສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ.

ອີງຕາມລະບຽບການທີ່ກ່ຽວຂ້ອງຂອງ ສຳນັກງານ ຄຄຊ ຈຶ່ງມີຄວາມຈຳເປັນຕ້ອງຄັດເລືອກ ບໍລິສັດ ກວດສອບພາຍນອກ ເພື່ອດຳເນີນການກວດສອບວຽກງານການເງິນ, ທັງເປັນຄວາມຮັບຜິດ ຊອບ ຕໍ່ຜູ້ລົງທຶນ ແລະຜູ້ຖືຮຸ້ນ.

ຕາຕະລາງຄ່າຈ້າງລວມອາກອນ ບໍລິສັດ ກວດສອບ EY

ລ/ດ	ຊື່ບໍລິສັດ	ເນື້ອໃນການກວດສອບ	ລາຄາວ່າຈ້າງ
2015	EY	ປະຈຳປີ	25.000 $
2016	EY	6 ເດືອນ ແລະປະຈຳປີ	33.000 $
2017	EY	ປະຈຳປີ	28.000 $
2018	EY	6 ເດືອນ ແລະປະຈຳປີ	31.600 $
2019	EY	6 ເດືອນ ແລະປະຈຳປີ	31.600 $
2020	EY	6 ເດືອນ ແລະປະຈຳປີ	31.600 $

ຜ່ານການສຶກສາທຽບຂໍ້ມູນ ແລະ ຕໍ່ລອງດ້ານລາຄາ ຈຶ່ງຄັດເລືອກເອົາບໍລິສັດກວດສອບ EY ທີ່ມີກຳນົດເວລາການກວດສອບໄລຍະ 03 ປີ ແຕ່ປີ 2018-2020 ໃນລາຄາກວດສອບ 94.800 ໂດລາ ຫຼືເທົ່າກັບ 31.600 ໂດລາ/ປີ ທີ່ມີລາຄາຕ່ຳກວ່າໃນຜ່ານມາ.

ດັ່ງນັ້ນ, ຈຶ່ງສະເໜີກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາ ແລະຮັບຮອງ.

ນະຄອນຫລວງວຽງຈັນ, ວັນທີ 22 MAY 2018

ບໍລິສັດ ຊິມ້ຽງລາວ ມະຫາຊົນ

ຊິມ້ຽງລາວ ມະຫາຊົນ
Lao General Public Company

ເອກະສານສັດຕິ 7 :

ບົດລາຍງານ

ວ່າດ້ວຍການແຕ່ງຕັ້ງກຳມະການສະພາບໍລິຫານ

- ອີງຕາມກົດລະບຽບການທີ່ກ່ຽວຂ້ອງ.
- ອີງຕາມການປຶກສາຫາລື ແລະຕົກລົງເປັນເອກະພາບຂອງກອງປະຊຸມສະພາບໍລິຫານ ບຊລ.

ສະເໜີພິຈາລະນາການແຕ່ງຕັ້ງທ່ານ ຫຼີໜີ ຂຶ້ນດຳລົງຕຳແໜ່ງເປັນກຳມະການສະພາບໍລິ ຫານຜູ້ໃໝ່,ປ່ຽນແທນທ່ານ ຈ້າວຊຶ ຮອງປະທານສະພາບໍລິຫານ LCC ຜູ່ເກົ່າທີ່ໄປດຳລົງຕຳແໜ່ງໃໝ່.

ດັ່ງນັ້ນ, ຈຶ່ງສະເໜີກອງປະຊຸມສາມັນຜູ່ຖືຮຸ້ນພິຈາລະນາຮັບຮອງ.

ນະຄອນຫລວງວຽງຈັນ, ວັນທີ 22 MAY 2018

ບໍລິສັດ ຊີມັງລາວ ມະຫາຊົນ

ຊ້ອະປະຫວັດຫຍໍ້

- ຊື່ : ທ້າວ ຫຼ້ໜຶ່ງ ວັນເກີດ 1/1974 ທີ່ຢຸນນານ ຄຸນມິ່ງ, ເຂົ້າເຮັດວຽກ ເດືອນ 7/1996, ສະມາຊິກພັກ 10/1994.
- ປະຫວັດການຮຽນ : ປະລິນຍາຕີ ດ້ານເສດຖະກິດ ແລະຄະນິດສາດປະລິນຍາໂທ MBA ທີ່ ມະຫາໄລຢຸນນານ
- ຄຸນວຸດ : ວິສາວະກອນ
- ບ່ອນປະຈຳການ : CYC, ຜູ້ອຳນວຍການ ບໍລິສັດການຄ້າ ສາກົນ CYC
- ປະຫັວດການເຮັດວຽກ :

07/ - 07/05	ວຽກງົບປະມານໂຄງການ CYC
09/03 - 07/05	ເລຂາຫ້ອງການ ຜູ້ອຳນວຍການ CYC
07/05 - 02/06	ຮອງຫົວໜ້າພະແນກບຸກຄະລາກອນ
02/06 - 07/07	ຫົວໜ້າຫ້ອງການ CYC
08/07 - 02/10	ຫ້ອງການສຳນັກງານກຳປູເຈ້ຍ
02/10 - 09/12	ຮອງພະແນກສົ່ງເສີມການຄ້າ CYC
09/12 - 12/14	ຫົວໜ້າຫ້ອງການພັກ CYC
01/15 - ປັດຈຸບັນ	ຜູ້ອຳນວຍການ CYC ສາຂາບໍລິສັດການຄ້າສາກົນ

ວັນທີ / Date:.....ເດືອນ / Month:.....ປີ/Year:.....

ເຈົ້າຂອງປະຫວັດເຊັນ /Signature

( )